ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ
****

ແຂວງບໍລິຄຳໄຊ
ສະພາປະຊາຊົນແຂວງ

ເລກທີ 39/ສພຂ.ບຊ.
ບໍລິຄຳໄຊ, ວັນທີ 03 ກຸມພາ 2023

ມະຕິ
ກອງປະຊຸມສະພາປະຊາຊົນແຂວງ
ກ່ຽວກັບການຮັບຮອງເອົາຂໍ້ຕົກລົງຂອງທ່ານເຈົ້າແຂວງ
ວ່າດ້ວຍກອງທຶນທານຸເຄາະ ຂອງສະຫະພັນກຳມະບານ ແຂວງບໍລິຄຳໄຊ

- ອີງຕາມ ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ ສະບັບເລກທີ 65/ສພຊ, ລົງວັນທີ 10 ທັນວາ 2015, ມາດຕາ 11 ກ່ຽວກັບການພິຈາລະນາ ແລະ ຮັບຮອງເອົານິຕິກຳທີ່ສຳຄັນຂອງທ້ອງຖິ່ນ,
- ອີງຕາມ ໜັງສືສະເໜີຂອງອົງການປົກຄອງແຂວງ ສະບັບເລກທີ 09/ຂບຊ, ລົງວັນທີ 27 ມັງກອນ 2023.

ພາຍຫຼັງທີ່ກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາປະຊາຊົນແຂວງບໍລິຄຳໄຊ ຊຸດທີ II ໄດ້ ຄົ້ນຄວ້າ, ພິຈາລະນາຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນ ຂໍ້ຕົກລົງຂອງທ່ານເຈົ້າແຂວງວ່າດ້ວຍກອງທຶນທານຸເຄາະ ຂອງສະຫະພັນກຳມະບານ ແຂວງບໍລິຄຳໄຊ ໃນວາລະກອງປະຊຸມຕອນເຊົ້າ ຂອງວັນທີ 2 ກຸມພາ 2023.

ກອງປະຊຸມສະພາປະຊາຊົນແຂວງ ຕົກລົງ:

ມາດຕາ 1: ຮັບຮອງເອົາຂໍ້ຕົກລົງຂອງທ່ານເຈົ້າແຂວງວ່າດ້ວຍກອງທຶນທານຸເຄາະ ຂອງສະຫະພັນກຳມະບານ ແຂວງບໍລິຄຳໄຊ ດ້ວຍຄະແນນສຽງເຫັນດີເປັນສ່ວນຫຼາຍ.

ມາດຕາ 2: ມອບໃຫ້ທ່ານເຈົ້າແຂວງ ລົງລາຍເຊັນ ແລະ ປະກາດໃຊ້ຢ່າງເປັນທາງການ.

ມາດຕາ 3: ມະຕິສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ປະທານສະພາປະຊາຊົນແຂວງບໍລິຄຳໄຊ

ປ.ອ ສຸວັນນີ ໄຊຊະນະ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ແຂວງບໍ່ລິຄຳໄຊ

ເລກທີ 192/ຂບຊ

ບໍ່ລິຄຳໄຊ, ວັນທີ 06 ເມສາ 2023

ຂໍ້ຕົກລົງ
ວ່າດ້ວຍ ການຄຸ້ມຄອງກອງທຶນທານຸເຄາະຂອງສະຫະພັນກຳມະບານແຂວງ

- ອີງຕາມ ກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ ສະບັບເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015;
- ອີງຕາມ ກົດໝາຍວ່າດ້ວຍການສ້າງນິຕິກຳ ສະບັບເລກທີ 06/ສພຊ, ລົງວັນທີ 16 ກຸມພາ 2021;
- ອີງຕາມ ກົດໝາຍວ່າດ້ວຍກຳມະບານລາວ (ສະບັບປັບປຸງ) ເລກທີ 39/ສພຊ, ລົງວັນທີ 15 ພະຈິ 2017;
- ອີງຕາມ ມະຕິກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາປະຊາຊົນ ແຂວງບໍ່ລິຄຳໄຊ ຊຸດທີ II ສະບັບ ເລກທີ 32/ສພຂ.ບຊ, ລົງວັນທີ 9 ກຸມພາ 2023.

ເຈົ້າແຂວງ ຕົກລົງ:

ໝວດທີ I
ບົດບັນຍັດທົ່ວໄປ

ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ໄດ້ກຳນົດເນື້ອໃນການ, ລະບຽບການ, ມາດຕະການກ່ຽວກັບການຈັດຕັ້ງ ແລະ ການເຄື່ອນໄຫວກອງທຶນທານຸເຄາະຂອງສະຫະພັນກຳມະບານແຂວງ ເພື່ອລະດົມທຶນ ແລະ ນຳໃຊ້ເງິນກອງທຶນ, ແນໃສ່ເຮັດໃຫ້ການຄຸ້ມຄອງກອງທຶນມີປະສິດທິຜົນ, ຮັບປະກັນການເຕົ້າໂຮມຄວາມສາມັກຄີຂອງສະມາຊິກກຳມະບານ, ປະກອບສ່ວນແບ່ງເບົາພາລະໃຊ້ຈ່າຍໃຫ້ແກ່ຄອບຄົວຂອງສະມາຊິກກອງທຶນຜູ້ທີ່ເສຍຊີວິດ.

ມາດຕາ 2 ການຄຸ້ມຄອງກອງທຶນທານຸເຄາະຂອງສະຫະພັນກຳມະບານແຂວງ

ການຄຸ້ມຄອງກອງທຶນທານຸເຄາະຂອງສະຫະພັນກຳມະບານແຂວງ ແມ່ນການຄຸ້ມຄອງການລະດົມທຶນ, ການສະສົມທຶນ ແລະ ການນຳໃຊ້ກອງທຶນເພື່ອຊ່ວຍເຫຼືອບັນເທົາທຸກໃຫ້ຄອບຄົວຂອງສະມາຊິກກອງທຶນຜູ້ທີ່ເສຍຊີວິດ.

ມາດຕາ 3 ອະທິບາຍຄຳສັບ

ຄຳສັບທີ່ນຳໃຊ້ເຂົ້າໃນຂໍ້ຕົກລົງສະບັບນີ້ມີຄວາມໝາຍ ດັ່ງນີ້:

1. **ທານຸເຄາະ** ໝາຍເຖິງການຊ່ວຍເຫຼືອ, ບັນເທົາທຸກໃນເວລາເສຍຊີວິດ;
2. **ເງິນສົມທົບ** ໝາຍເຖິງເງິນທີ່ສະມາຊິກກອງທຶນຜູ້ເຂົ້າໃໝ່ຕ້ອງຈ່າຍເງິນເຂົ້າກອງທຶນທານຸເຄາະ ຕາມລະບຽບກຳນົດໄວ້;

Camcanner

3. **ເງິນພັນທະ** ໝາຍເຖິງຈຳນວນເງິນທີ່ສະມາຊິກກອງທຶນຕ້ອງໄດ້ຈ່າຍໃນເວລາມີສະມາຊິກເສຍຊີວິດ ຕາມລະບຽບໄດ້ກຳນົດໄວ້;

4. **ເງິນແຮລ່ວງໜ້າ** ໝາຍເຖິງ ຈຳນວນເງິນສຳຮອງທີ່ສະສົມໄວ້ ເພື່ອປະຕິບັດນະໂຍບາຍຕໍ່ກັບສະມາຊິກກອງທຶນທີ່ເສຍຊີວິດໃຫ້ທັນກັບກຳນົດເວລາ;

5. **ບັດສະມາຊິກກອງທຶນ** ໝາຍເຖິງເອກະສານທີ່ຢັ້ງຢືນການມີຕົວຕົນຂອງສະມາຊິກຢ່າງຖືກຕ້ອງໂດຍຄະນະກຳມະການກອງທຶນທານຸເຄາະເປັນຜູ້ອອກໃຫ້ເທົ່ານັ້ນ;

6. **ສະມາຊິກກຳມະບານ** ໝາຍເຖິງບຸກຄົນທີ່ເປັນພະນັກງານ-ລັດຖະກອນ, ນັກສຶກສາ, ປັນຍາຊົນ, ຢູ່ໃນການຈັດ ຕັ້ງພັກ-ລັດ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ກຳມະກອນ, ຊາວຜູ້ອອກແຮງງານອື່ນ ທີ່ໄດ້ຮັບເຂົ້າ ແລະ ຂຶ້ນທະບຽນເປັນສະມາຊິກກຳມະບານ;

ມາດຕາ 4 ນະໂຍບາຍຂອງລັດ

1. ລັດ ສົ່ງເສີມ ແລະ ອຳນວຍຄວາມສະດວກໃຫ້ການເຄື່ອນໄຫວວຽກງານກອງທຶນທານຸເຄາະຂອງສະຫະພັນກຳມະບານແຂວງ ໃຫ້ຖືກຕ້ອງສອດຄ່ອງຕາມກົດໝາຍ, ລະບຽບການ ແລະ ມີຄວາມຍືນຍົງ.

2. ລັດ ຊຸກຍູ້ ແລະ ອຳນວຍຄວາມສະດວກໃຫ້ສະມາຊິກກຳມະບານ ຢູ່ໃນການຈັດຕັ້ງທຸກຂັ້ນພາຍໃນແຂວງ ໄດ້ເຂົ້າຮ່ວມເປັນສະມາຊິກກອງທຶນທານຸເຄາະຂອງສະຫະພັນກຳມະບານແຂວງ;

3. ລັດ ເປີດກວ້າງທຸກຜາສ່ວນສະແດງຄວາມຄິດເຫັນ ແລະ ສະເໜີບັນຫາຕ່າງໆ ເພື່ອໃຫ້ມີຄວາມເອກະພາບໃນການຈັດຕັ້ງປະຕິບັດວຽກງານກອງທຶນທານຸເຄາະຂອງສະຫະພັນກຳມະບານແຂວງ;

4. ລັດ ປົກປ້ອງສິດຜົນປະໂຫຍດອັນຊອບທຳຂອງສະມາຊິກກອງທຶນ ແລະ ການຈັດຕັ້ງພາຍໃນແຂວງ ໃຫ້ໄດ້ຮັບຄວາມຍຸຕິທຳຕາມກົດໝາຍ ແລະ ລະບຽບການ.

ມາດຕາ 5 ຫຼັກການພື້ນຖານ

ການຄຸ້ມຄອງກອງທຶນທານຸເຄາະ ປະຕິບັດຕາມຫຼັກການພື້ນຖານດັ່ງນີ້:

1. ຮັບປະກັນຄວາມຖືກຕ້ອງ, ສອດຄ່ອງກັບນະໂຍບາຍຂອງລັດ, ກົດໝາຍ ແລະ ລະບຽບການ;
2. ມີຄວາມສະໝັກໃຈ ແລະ ປະຕິບັດພັນທະຕໍ່ກອງທຶນທານຸເຄາະ;
3. ປະສານສົມທົບ, ມີຄວາມເປັນເອກະພາບກັບບຸກຄົນ ແລະ ການຈັດຕັ້ງທີ່ກ່ຽວຂ້ອງ ໃນການເຂົ້າເປັນສະມາຊິກກອງທຶນທານຸເຄາະ;
4. ມີຄວາມຍຸຕິທຳ,ໂປ່ງໃສ, ເປີດເຜີຍ ແລະ ສາມາດກວດສອບໄດ້.

ມາດຕາ 6 ຂອບເຂດການນຳໃຊ້

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບບຸກຄົນ ແລະ ການຈັດຕັ້ງ ທີ່ເປັນສະມາຊິກກອງທຶນທານຸເຄາະຂອງສະຫະພັນກຳມະບານແຂວງບໍລິຄຳໄຊ.

ໝວດທີ II
ເງື່ອນໄຂການຮັບ ແລະ ສິ້ນສຸດການເປັນສະມາຊິກກອງທຶນທານຸເຄາະ

ມາດຕາ 7 ເງື່ອນໄຂຮັບເຂົ້າເປັນສະມາຊິກກອງທຶນທານຸເຄາະ.

ເງື່ອນໄຂຮັບເຂົ້າເປັນສະມາຊິກກອງທຶນທານຸເຄາະ ມີດັ່ງນີ້:

1. ຕ້ອງເປັນສະມາຊິກກຳມະບານ ຫຼື ອະດີດສະມາຊິກກຳມະບານທີ່ເປັນສະມາຊິກກອງທຶນຊ່ວຍເຫຼືອເຊິ່ງກັນ ແລະ ກັນຂອງສະຫະພັນກຳມະບານແຂວງ ທີ່ມີຄວາມສະໝັກໃຈ;
2. ຕ້ອງມີສຸຂະພາບແຂງແຮງໂດຍໄດ້ຮັບການຢັ້ງຢືນຈາກການຈັດຕັ້ງທີ່ກ່ຽວຂ້ອງ;
3. ຕ້ອງມີເອກະສານຢັ້ງຢືນຈາກການຈັດຕັ້ງກຳມະບານທີ່ສັງກັດຢູ່;
4. ຕ້ອງຈ່າຍເງິນສົມທົບ ຕາມມາດຕາ 9 ຂໍ້ທີ 1;

5. ສະເພາະຜູ້ທີ່ໄດ້ເຂົ້າເປັນສະມາຊິກກອງທຶນທານຸເຄາະ ຂອງສະຫະພັນກຳມະບານເມືອງປາກຊັນ ແລະ ເມືອງວຽງທອງ ແມ່ນຍົກເວັ້ນໃນ 4 ເງື່ອນໄຂ ຂ້າງເທິງນີ້ ແຕ່ຕ້ອງໄດ້ຈ່າຍເງິນເຮັດບັດສະມາຊິກກອງທຶນ 5,000 ກີບ.

ມາດຕາ 8 ການສິ້ນສຸດເປັນສະມາຊິກກອງທຶນທານຸເຄາະ

ສະມາຊິກກອງທຶນທານຸເຄາະ ຈະສິ້ນສຸດລົງໃນກໍລະນີ ດັ່ງນີ້:

1. ເສຍຊີວິດ;
2. ລາອອກດ້ວຍຄວາມສະໝັກໃຈ ຈະບໍ່ໄດ້ຮັບນະໂຍບາຍໃດໆຈາກກອງທຶນ ແລະ ຈຳນວນເງິນທີ່ໄດ້ປະຕິບັດພັນທະຜ່ານມາຖືວ່າເປັນການປະກອບສ່ວນກັບທານນຳສະມາຊິກກອງທຶນ;
3. ກະທຳຜິດຕໍ່ຂໍ້ຕົກລົງກອງທຶນທານຸເຄາະວ່າດ້ວຍ;
4. ບໍ່ມອບເງິນພັນທະໃຫ້ຄອບຄົວຂອງສະມາຊິກກອງທຶນທີ່ເສຍຊີວິດ ຕັ້ງແຕ່ 3 ຄົນ ຂຶ້ນໄປ ຈະບໍ່ໄດ້ຮັບນະໂຍບາຍໃດໆຈາກກອງທຶນ ແລະ ຈຳນວນເງິນທີ່ໄດ້ປະຕິບັດພັນທະຜ່ານມາຖືວ່າເປັນການປະກອບສ່ວນກັບທານນຳສະມາຊິກກອງທຶນ;
5. ຖືກຍົກຍ້າຍໄປຢູ່ແຂວງອື່ນ, ຖືກຕັດສິດສະຫຼະພາບ, ໄປຮຽນຕໍ່ໄລຍະຍາວຢູ່ພາຍໃນ ແລະ ຕ່າງປະເທດ ໂດຍບໍ່ສືບຕໍ່ຈ່າຍເງິນພັນທະຕໍ່ກອງທຶນຕາມລະບຽບການ ຈະບໍ່ໄດ້ຮັບນະໂຍບາຍໃດໆຈາກກອງທຶນ ແລະ ຈຳນວນເງິນທີ່ໄດ້ປະຕິບັດພັນທະຜ່ານມາຖືວ່າເປັນການປະກອບສ່ວນກັບທານນຳສະມາຊິກກອງທຶນ.

ໝວດທີ III
ການລະດົມທຶນ ແລະ ນຳໃຊ້ເງິນກອງທຶນທານຸເຄາະ

ມາດຕາ 9 ການລະດົມທຶນ

ການລະດົມທຶນກອງທຶນທານຸເຄາະໄດ້ມາຈາກແຫຼ່ງທຶນດັ່ງນີ້:

1. ສະມາຊິກກອງທຶນຜູ້ເຂົ້າໃໝ່ ຕ້ອງຈ່າຍເງິນສົມທົບເຂົ້າກອງທຶນ 25,000 ກີບຕໍ່ຄົນ; ໃນນັ້ນ 20,000 ກີບ ແມ່ນເປັນເງິນແຮຄັ້ງ ເພື່ອເກັບໄວ້ປະຕິບັດນະໂຍບາຍຕໍ່ສະມາຊິກທີ່ເສຍຊີວິດໃຫ້ທັນກັບເວລາ, 5,000 ກີບ ນຳໃຊ້ເຮັດບັດສະມາຊິກກອງທຶນ;
2. ຜູ້ທີ່ເປັນສະມາຊິກກອງທຶນ ຕ້ອງຈ່າຍເງິນພັນທະ 5,000 ກີບ ຕໍ່ສະມາຊິກ 1 ຄົນ ທີ່ເສຍຊີວິດ.

ມາດຕາ 10 ການກຳນົດເວລານຳສົ່ງເງິນເຂົ້າກອງທຶນ

1. ສະຫະພັນກຳມະບານແຂວງ ຕ້ອງອອກແຈ້ງການ ໃຫ້ການຈັດຕັ້ງກຳມະບານທີ່ກ່ຽວຂ້ອງ ຊ້ຳສຸດບໍ່ໃຫ້ເກີນ 1 ວັນ ພາຍຫຼັງທີ່ໄດ້ຮັບໃບລາຍງານການເສຍຊີວິດ;
2. ສະຫະພັນກຳມະບານເມືອງ, ສະຫະພັນກຳມະບານພະແນກການ ແລະ ກຳມະບານຮາກຖານຕ້ອງເກັບເງິນນຳສະມາຊິກກອງທຶນທານຸເຄາະ ແລະ ສົ່ງໃຫ້ສະຫະພັນກຳມະບານແຂວງ ເພື່ອທົດແທນເງິນແຮຄັ້ງ ຊ້ຳສຸດບໍ່ໃຫ້ເກີນ 5 ວັນທຳລັດຖະການ ເມື່ອໄດ້ຮັບແຈ້ງການການເສຍຊີວິດຂອງສະມາຊິກກອງທຶນ ຈາກສະຫະພັນກຳມະບານແຂວງ.

ມາດຕາ 11 ການນຳໃຊ້ເງິນກອງທຶນທານຸເຄາະ

ເງິນກອງທຶນທານຸເຄາະຈະຖືກນຳໃຊ້ໃນກໍລະນີດັ່ງນີ້:

1. ນຳໃຊ້ປະຕິບັດນະໂຍບາຍຊ່ວຍເຫຼືອບັນເທົາທຸກແກ່ສະມາຊິກກອງທຶນທີ່ເສຍຊີວິດຕາມອາຍຸການເຂົ້າເປັນສະມາຊິກກອງທຶນ:

- ຜູ້ທີ່ສະໝັກເຂົ້າເປັນສະມາຊິກກອງທຶນທານຸເຄາະແຕ່ 1 ວັນ ຫາ 1 ປີ ຖ້າເສຍຊີວິດທາງຄອບຄົວຈະໄດ້ຮັບເງິນນະໂຍບາຍຊ່ວຍເຫຼືອບັນເທົາທຸກ 70% ຂອງຈຳນວນເງິນຜັນທະທີ່ເກັບໄດ້ທັງໝົດຈາກສະມາຊິກກອງທຶນຜູ້ໜຶ່ງ 5,000 ກີບ ຕໍ່ໜຶ່ງຄົນທີ່ເສຍຊີວິດ;
- ຜູ້ທີ່ເຂົ້າເປັນສະມາຊິກກອງທຶນທານຸເຄາະແຕ່ 1 ປີ 1 ວັນ - 3 ປີ ຖ້າເສຍຊີວິດທາງຄອບຄົວຈະໄດ້ຮັບເງິນນະໂຍບາຍຊ່ວຍເຫຼືອບັນເທົາທຸກ 80% ຂອງຈຳນວນເງິນຜັນທະທີ່ເກັບໄດ້ທັງໝົດຈາກສະມາຊິກກອງທຶນຜູ້ໜຶ່ງ 5,000 ກີບ ຕໍ່ໜຶ່ງຄົນທີ່ເສຍຊີວິດ;
- ຜູ້ທີ່ເຂົ້າເປັນສະມາຊິກກອງທຶນທານຸເຄາະ ແຕ່ 3 ປີ 1 ວັນຂຶ້ນໄປ ຖ້າເສຍຊີວິດທາງຄອບຄົວຈະໄດ້ຮັບເງິນນະໂຍບາຍຊ່ວຍເຫຼືອບັນເທົາທຸກ 90% ຂອງຈຳນວນເງິນຜັນທະທີ່ເກັບໄດ້ທັງໝົດຈາກສະມາຊິກກອງທຶນຜູ້ໜຶ່ງ 5,000 ກີບ ຕໍ່ໜຶ່ງຄົນທີ່ເສຍຊີວິດ.

2. ນຳໃຊ້ເຂົ້າໃນການບໍລິຫານກອງທຶນ:

ຈ່າຍບໍລິຫານກອງທຶນ 10% ຂອງເງິນຜັນທະທີ່ເກັບໄດ້ຈາກສະມາຊິກ 5,000 ກີບຕໍ່ໜຶ່ງຄົນທີ່ເສຍຊີວິດ ໃນນັ້ນຈ່າຍໃຫ້ສະຫະພັນກຳມະບານແຂວງ 3% (ຊື້ຜວງມາລາ, ເຈ້ຍ, ນ້ຳມິກ, ນ້ຳມັນລົດ, ອັດຕາກິນໃຫ້ພະນັກງານລົງໄປມອບເງິນ, ສະຫຼຸບລາຍງານປະຈຳເດືອນ, ປະຈຳໄຕມາດ, ຈັດກອງປະຊຸມສະຫຼຸບ, ຖອດຖອນບົດຮຽນ ປະຈຳ 6 ເດືອນ ແລະ 1 ປີ), ຈ່າຍໃຫ້ສະຫະພັນກຳມະບານເມືອງ 7 ຕົວເມືອງ (ເມືອງລະ 1%)ລວມເປັນ 7% (ຊື້ເຈ້ຍ, ນ້ຳມິກ, ນ້ຳມັນລົດ, ອັດຕາກິນໃຫ້ພະນັກງານລົງໄປມອບເງິນ ແລະ ຜວງມາລາໃຫ້ຄອບຄົວຜູ້ເສຍຊີວິດທີ່ຢູ່ຂອບເຂດຄວາມຮັບຜິດຊອບຂອງເມືອງ).

3. ເງິນແຮຄັງ:

ຈຳນວນເງິນທີ່ເຫຼືອຈ່າຍນະໂຍບາຍ ແລະ ບໍລິຫານກອງທຶນແຕ່ລະກໍລະນີທີ່ເສຍຊີວິດ ແມ່ນມອບເຂົ້າເປັນເງິນແຮຄັງຂອງກອງທຶນ.

ໝວດທີ IV
ການປະຕິບັດນະໂຍບາຍຕໍ່ສະມາຊິກກອງທຶນທີ່ເສຍຊີວິດ

ມາດຕາ 12 ການສະເໜີຂໍນະໂຍບາຍ

ການສະເໜີຂໍນະໂຍບາຍມີຂັ້ນຕອນດັ່ງນີ້:

1. ໃນເວລາມີສະມາຊິກກອງທຶນເສຍຊີວິດ ການຈັດຕັ້ງກຳມະບານບ່ອນທີ່ສະມາຊິກກອງທຶນທານຸເຄາະເສຍຊີວິດສັງກັດຢູ່ ຕ້ອງລາຍງານໃຫ້ປະທານກອງທຶນທານຸເຄາະ ຮັບຊາບເປັນລາຍລັກອັກສອນໂດຍໄວ;
2. ຕ້ອງມີເອກະສານການຢັ້ງຢືນຈາກພາກສ່ວນທີ່ກ່ຽວຂ້ອງເຊັ່ນ: ໃບຢັ້ງຢືນການເສຍຊີວິດຈາກອຳນາດການປົກຄອງບ້ານ ຫຼື ໃບລາຍງານຂອງສະຫະພັນກຳມະບານເມືອງ, ສະຫະພັນກຳມະບານພະແນກການ ແລະ ກຳມະບານຮາກຖານອ້ອມຂ້າງແຂວງ;
3. ນຳສົ່ງເອກະສານ ບັດສະມາຊິກກອງທຶນ, ໃບຢັ້ງຢືນການເສຍຊີວິດ, ພ້ອມໜັງສືສະເໜີຂໍນະໂຍບາຍໃຫ້ສະຫະພັນກຳມະບານແຂວງ ຊ້າສຸດບໍ່ໃຫ້ເກີນ 3 ວັນ ນັບແຕ່ມີ້ສະມາຊິກເສຍຊີວິດ.

ມາດຕາ 13 ການປະຕິບັດນະໂຍບາຍຕໍ່ສະມາຊິກກອງທຶນ

ສະຫະພັນກຳມະບານແຂວງ ຕ້ອງຄົ້ນຄວ້າ ນຳສົ່ງເງິນນະໂຍບາຍໃຫ້ສະຫະພັນກຳມະບານເມືອງ, ສະຫະພັນກຳມະບານພະແນກການ ແລະ ກຳມະບານຮາກຖານ ທີ່ມີສະມາຊິກເສຍຊີວິດບໍ່ໃຫ້ເກີນ 1 ວັນ ທາງລັດຖະການ ນັບແຕ່ໄດ້ຮັບໜັງສືສະເໜີເປັນຕົ້ນໄປ, ສຳລັບສະຫະພັນກຳມະບານເມືອງ, ສະຫະພັນກຳ

ມະບານພະແນກການ ແລະ ກຳມະບານຮາກຖານອ້ອມຂ້າງແຂວງ ແມ່ນໃຫ້ນຳເງິນນະໂຍບາຍກອງທຶນໄປ ມອບໃຫ້ແກ່ຄອບຄົວສະມາຊິກກອງທຶນທີ່ເສຍຊີວິດບໍ່ໃຫ້ເກີນ 1 ວັນນັບແຕ່ວັນໄດ້ຮັບເງິນຈາກສະຫະພັນ ກຳມະບານແຂວງເປັນຕົ້ນໄປ ແລະ ສ່ວນເງິນນະໂຍບາຍຈະໄດ້ຮັບຕາມມາດຕາ 11 ຂອງຂໍ້ຕົກລົງສະບັບນີ້.

ໝວດທີ V
ຂໍ້ຫ້າມ

ມາດຕາ 14 ຂໍ້ຫ້າມທົ່ວໄປ

ຫ້າມບຸກຄົນ ແລະ ການຈັດຕັ້ງມີພຶດຕິກຳດັ່ງນີ້:

1. ສວຍໃຊ້ໜ້າທີ່ຕຳແໜ່ງ, ຄວາມຮັບຜິດຊອບຂອງຕົນ, ໃຫ້ຂໍ້ມູນທີ່ບໍ່ມີມູນຄວາມຈິງ ເພື່ອສະເໜີຂໍ້ນະໂຍບາຍໄປໃຊ້ຈ່າຍຫາຜົນປະໂຫຍດສ່ວນຕົວ, ຄອບຄົວ ແລະ ຍາດພີ່ນ້ອງ;
2. ສ້າງອຸປະສັກ, ຂັດຂວາງ, ເມີນເສີຍ ແລະ ບໍ່ໃຫ້ການຮ່ວມມືໃນວຽກງານກອງທຶນທານຸເຄາະ;
3. ໂຄສະນາ, ໃສ່ຮ້າຍປ້າຍສີຕໍ່ວຽກງານກອງທຶນທານຸເຄາະ.

ມາດຕາ 15 ຂໍ້ຫ້າມສຳລັບບຸກຄົນໃນຄະນະຮັບຜິດຊອບກອງທຶນທານຸເຄາະ.

ຫ້າມບຸກຄົນໃນຄະນະຮັບຜິດຊອບກອງທຶນມີພຶດຕິກຳດັ່ງນີ້:

1. ສວຍໃຊ້ໜ້າທີ່ຄວາມຮັບຜິດຊອບເພື່ອສະແຫວງຫາຜົນປະໂຫຍດສ່ວນຕົວ;
2. ກົດໜ່ວງຖ່ວງດຶງເອກະສານ, ປອມແປງເອກະສານ ແລະ ເມີນເສີຍຕໍ່ຄວາມຮັບຜິດຊອບ;
3. ນຳໃຊ້ເງິນກອງທຶນບໍ່ຖືກເປົ້າໝາຍໃຫ້ບຸກຄົນ ແລະ ການຈັດຕັ້ງກູ້ຍືມ;
4. ນຳໃຊ້ເງິນກອງທຶນໂດຍບໍ່ໄດ້ຮັບອະນຸຍາດ ຈາກຄະນະຮັບຜິດຊອບຄຸ້ມຄອງກອງທຶນທານຸເຄາະ;
5. ມີພຶດຕິກຳອື່ນຕໍ່ວຽກງານກອງທຶນທານຸເຄາະທີ່ເປັນການລະເມີດລະບຽບ ແລະ ກົດໝາຍ.

ມາດຕາ 16 ຂໍ້ຫ້າມສຳລັບສະມາຊິກກອງທຶນ.

ຫ້າມສະມາຊິກກອງທຶນມີພຶດຕິກຳດັ່ງນີ້:

1. ສົມຮູ້ຮ່ວມຄິດ, ປອມແປງເອກະສານ;
2. ໃຫ້ສິນບົນ ເພື່ອສະແຫວງຫາຜົນປະໂຫຍດ;
3. ເມີນເສີຍບໍ່ປະຕິບັດພັນທະຕໍ່ກອງທຶນ;
4. ມີພຶດຕິກຳອື່ນຕໍ່ວຽກງານກອງທຶນທານຸເຄາະທີ່ເປັນການລະເມີດລະບຽບ ແລະ ກົດໝາຍ.

ມາດຕາ 17 ຂໍ້ຫ້າມສຳລັບອົງການຈັດຕັ້ງກຳມະບານ

1. ນຳໃຊ້ເງິນບໍ່ຖືກເປົ້າໝາຍ;
2. ເມີນເສີຍຕໍ່ຄວາມຮັບຜິດຊອບ;
3. ສົມຮູ້ຮ່ວມຄິດ, ກົດໜ່ວງຖ່ວງດຶງເອກະສານ, ປອມແປງເອກະສານ ເພື່ອສະແຫວງຫາຜົນປະໂຫຍດ;
4. ມີພຶດຕິກຳອື່ນຕໍ່ວຽກງານກອງທຶນທານຸເຄາະທີ່ເປັນການລະເມີດລະບຽບ ແລະ ກົດໝາຍ.

ໝວດທີ VI
ການແກ້ໄຂຂໍ້ຂັດແຍ່ງ

ມາດຕາ 18 ການແກ້ໄຂຂໍ້ຂັດແຍ່ງ

ການແກ້ໄຂຂໍ້ຂັດແຍ່ງກ່ຽວກັບກອງທຶນທານຸເຄາະ ສາມາດດຳເນີນດ້ວຍຮູບການໃດໜຶ່ງ ດັ່ງນີ້:

1. ການໄກ່ເກ່ຍ;

2. ການແກ້ໄຂ ທາງດ້ານບໍລິຫານ;

3. ການແກ້ໄຂຕາມຂະບວນການຍຸຕິທຳ.

ມາດຕາ 19 ການໄກ່ເກ່ຍ

ໃນກໍລະນີມີຂໍ້ຂັດແຍ່ງກ່ຽວກັບກອງທຶນທານຸເຄາະ ຄູ່ກໍລະນີສາມາດແກ້ໄຂຂໍ້ຂັດແຍ່ງດ້ັງກ່າວດ້ວຍການປຶກສາຫາລື, ເຈລະຈາ, ຕົກລົງກັນ ຫຼື ການໄກ່ເກ່ຍເພື່ອໃຫ້ຕ່າງຝ່າຍຕ່າງໄດ້ຮັບຜົນປະໂຫຍດ.

ມາດຕາ 20 ການແກ້ໄຂທາງດ້ານບໍລິຫານ

ໃນກໍລະນີ ມີຂໍ້ຂັດແຍ່ງກ່ຽວກັບກອງທຶນທານຸເຄາະ ຄູ່ກໍລະນີ ທີ່ໄດ້ຮັບຄວາມເສຍຫາຍບໍ່ສາມາດໄກ່ເກ່ຍກັນໄດ້ຕ້ອງສະເໜີໃຫ້ຄະນະຊີ້ນຳ, ຄະນະຄຸ້ມຄອງວຽກງານກອງທຶນທານຸເຄາະ ແລະ ການຈັດຕັ້ງທີ່ກ່ຽວຂ້ອງພິຈາລະນາແກ້ໄຂຕາມລະບຽບການທີ່ກ່ຽວຂ້ອງ.

ມາດຕາ 20 ການແກ້ໄຂຕາມຂະບວນການຍຸຕິທຳ

ໃນກໍລະນີມີຂໍ້ຂັດແຍ່ງກ່ຽວກັບກອງທຶນທານຸເຄາະ ທີ່ຜ່ານການໄກ່ເກ່ຍ, ການແກ້ໄຂທາງດ້ານບໍລິຫານແລ້ວ ແຕ່ຄູ່ກໍລະນີບໍ່ສາມາດຕົກລົງກັນໄດ້, ຄູ່ກໍລະນີຝ່າຍໃດ ຝ່າຍໜຶ່ງ ສາມາດຮ້ອງຟ້ອງຕໍ່ສານປະຊາຊົນ ເພື່ອພິຈາລະນາຕັດສິນຕາມກົດໝາຍ.

ໝວດທີ VII
ການຄຸ້ມຄອງກອງທຶນທານຸເຄາະ

ມາດຕາ 21 ການຄຸ້ມຄອງກອງທຶນທານຸເຄາະ

ກອງທຶນທານຸເຄາະຄຸ້ມຄອງລວມຢູ່ສະຫະພັນກຳມະບານແຂວງໂດຍນຳເອົາເງິນກອງທຶນໄປຝາກໄວ້ທະນາຄານທຸລະກິດ, ຮັບຜິດຊອບອະນຸມັດຈ່າຍໂດຍປະທານສະຫະພັນກຳມະບານແຂວງ ຫຼື ມອບສິດໃຫ້ຮອງປະທານສະຫະພັນກຳມະບານແຂວງ ເປັນຜູ້ອະນຸມັດແທນ, ມີຄະນະຮັບຜິດຊອບບັນຊີ-ການເງິນທີ່ໄດ້ຮັບການແຕ່ງຕັ້ງສະເພາະ.

ມາດຕາ 22 ຄະນະກຳມະການຊີ້ນຳກອງທຶນທານຸເຄາະ

ຄະນະກຳມະການຊີ້ນຳກອງທຶນທານຸເຄາະ ແຕ່ງຕັ້ງໂດຍທ່ານເຈົ້າແຂວງ ເຊິ່ງປະກອບມີ:

1. ຮອງເຈົ້າແຂວງ, ຜູ້ຊີ້ນຳວຽກງານວັດທະນະທຳ-ສັງຄົມ	ເປັນຫົວໜ້າ
2. ປະທານແນວລາວສ້າງຊາດແຂວງ	ເປັນຮອງຫົວໜ້າ
3. ຫົວໜ້າພະແນກການເງິນແຂວງ	ເປັນຮອງຫົວໜ້າ
4. ເຈົ້າເມືອງ 7 ຕົວເມືອງ	ເປັນຄະນະ
5. ຫົວໜ້າພະແນກການ, ອົງການ, ບໍລິສັດ, ລັດວິສາຫະກິດ	ເປັນຄະນະ

ມາດຕາ 23 ສິດ ແລະ ໜ້າທີ່ ຂອງຄະນະກຳມະການຊີ້ນຳກອງທຶນທານຸເຄາະ

ສິດ ແລະ ໜ້າທີ່ ຂອງຄະນະກຳມະການຊີ້ນຳກອງທຶນທານຸເຄາະ ມີດັ່ງນີ້:

1. ຊຸກຍູ້, ປຸກລະດົມ, ໂຄສະນາເຜີຍແຜ່ວຽກງານກອງທຶນທານຸເຄາະ ໃຫ້ທົ່ວສັງຄົມຮັບຮູ້;
2. ຊີ້ນຳ ຕິດຕາມ-ກວດກາ ການເຄື່ອນໄຫວກອງທຶນທານຸເຄາະ;
3. ຮັບຄຳຮ້ອງ, ຄຳສະເໜີຂອງສະມາຊິກກອງທຶນທານຸເຄາະ;
4. ຮຽກປະຊຸມເພື່ອແກ້ໄຂຂໍ້ຂັດແຍ່ງໃນວຽກງານກອງທຶນທານຸເຄາະ ຫຼື ກອງປະຊຸມອື່ນທີ່ມີຄວາມຈຳເປັນ.

ມາດຕາ 24 ຄະນະຄຸ້ມຄອງກອງທຶນທານຸເຄາະ

ຄະນະກຳມະການຄຸ້ມຄອງກອງທຶນທານຸເຄາະ ແຕ່ງຕັ້ງໂດຍທ່ານເຈົ້າແຂວງປະກອບດ້ວຍ ພາກສ່ວນທີ່ກ່ຽວຂ້ອງມີດັ່ງນີ້:

1. ປະທານສະຫະພັນກຳມະບານແຂວງ ເປັນຫົວໜ້າ
2. ຮອງປະທານສະຫະພັນກຳມະບານແຂວງ ເປັນຮອງ
3. ປະທານສະຫະພັນກຳມະບານເມືອງ, ເປັນຄະນະ
4. ປະທານສະຫະພັນກຳມະບານພະແນກການ, ລັດວິສາຫະກິດ, ປະທານກຳມະບານທາກຖານອ້ອມຂ້າງແຂວງ ແລະ ເມືອງ ເປັນຄະນະ
5. ພະນັກງານວິຊາການຂອງສະຫະພັນກຳມະບານແຂວງ ຈຳນວນໜຶ່ງ ເປັນກອງເລຂາ

ມາດຕາ 25 ສິດ ແລະ ໜ້າທີ່ຂອງປະທານສະຫະພັນກຳມະບານແຂວງ

ສິດ ແລະ ໜ້າທີ່ຂອງປະທານສະຫະພັນກຳມະບານແຂວງ ມີດັ່ງນີ້:

1. ເປັນປະທານກອງທຶນທານຸເຄາະຂອງສະຫະພັນກຳມະບານແຂວງ ນຳພາ-ຊີ້ນຳລວມວຽກງານກອງທຶນທານຸເຄາະ;
2. ຄົ້ນຄວ້າ, ອະນຸມັດຮັບຮອງເອົາສະມາຊິກກອງທຶນເຂົ້າໃໝ່ ແລະ ລາອອກຈາກການເປັນສະມາຊິກກອງທຶນ;
3. ຄົ້ນຄວ້າ ແລະ ອະນຸມັດຈ່າຍເງິນນະໂຍບາຍໃຫ້ແກ່ສະມາຊິກກອງທຶນທານຸເຄາະຜູ້ເສຍຊີວິດ;
4. ລາຍງານສະພາບການເຄື່ອນໄຫວ ແລະ ຂໍທິດຊີ້ນຳ ການຈັດຕັ້ງປະຕິບັດວຽກງານກອງທຶນທານຸເຄາະໃຫ້ຂຶ້ນເທິງຖືກຕ້ອງ ແລະ ພາກສ່ວນທີ່ກ່ຽວຂ້ອງ;
5. ຮຽກປະຊຸມຄະນະກຳມະການຄຸ້ມຄອງກອງທຶນປະຈຳ 6 ເດືອນ, ປະຈຳປີ ແລະ ກອງປະຊຸມອື່ນໆທີ່ຈຳເປັນ;
6. ປະຕິບັດວຽກງານອື່ນໆກ່ຽວກັບການເຄື່ອນໄຫວວຽກງານກອງທຶນທານຸເຄາະ ບົນພື້ນຖານເຄົາລົບກົດໝາຍ ແລະ ລະບຽບການຢ່າງເຂັ້ມງວດ.

ມາດຕາ 26 ສິດ ແລະ ໜ້າທີ່ຂອງຮອງປະທານສະຫະພັນກຳມະບານແຂວງ

ສິດ ແລະ ໜ້າທີ່ຂອງຮອງປະທານສະຫະພັນກຳມະບານແຂວງ ມີດັ່ງນີ້:

1. ຊ່ວຍປະທານກອງທຶນໃນການບໍລິຫານກອງທຶນທານຸເຄາະ ຕາມການມອບໝາຍຂອງປະທານສະຫະພັນກຳມະບານ;
2. ເຂົ້າຮ່ວມຄົ້ນຄວ້າຮັບຮອງເອົາສະມາຊິກກອງທຶນເຂົ້າໃໝ່ ແລະ ລາອອກ ຈາກການເປັນສະມາຊິກກອງທຶນ;
3. ລົງຊຸກຍູ້, ປຸກລະດົມສະມາຊິກກຳມະບານ ໃຫ້ມີຄວາມຮັບຮູ້ເຂົ້າໃຈ ຢ່າງເລິກເຊິ່ງຕໍ່ວຽກງານກອງທຶນ ແລະ ສະໝັກໃຈເຂົ້າເປັນສະມາຊິກກອງທຶນທານຸເຄາະໃຫ້ໄດ້ດ້ານປະລິມານ ແລະ ຄຸນນະພາບ;
4. ຮັກສາການແທນປະທານກອງທຶນໃນເວລາປະທານບໍ່ຢູ່ ຫຼື ຕາມການມອບໝາຍ;
5. ປະຕິບັດສິດໜ້າທີ່ອື່ນໆ ຕາມການມອບໝາຍຂອງປະທານກອງທຶນທານຸເຄາະ.

ມາດຕາ 27 ສິດ ແລະ ໜ້າທີ່ ຂອງປະທານສະຫະພັນກຳມະບານເມືອງ

ສິດ ແລະ ໜ້າທີ່ ຂອງປະທານສະຫະພັນກຳມະບານເມືອງ ມີດັ່ງນີ້:

1. ນຳພາ, ຈັດຕັ້ງຜັນຂະຫຍາຍຂໍ້ຕົກລົງສະບັບນີ້ໃຫ້ເຂົ້າສູ່ວຽກງານຕົວຈິງຮອບດ້ານ;
2. ຮັບ ແລະ ຄົ້ນຄວ້າເອກະສານສະເໜີເຂົ້າເປັນສະມາຊິກກອງທຶນ ແລະ ລາອອກ ເພື່ອສະເໜີໃຫ້ປະທານກອງທຶນອະນຸມັດ;

3. ຮັບການລາຍງານການເສຍຊີວິດຂອງສະມາຊິກກອງທຶນ ເພື່ອສະເໜີຂໍນະໂຍບາຍຈາກກອງທຶນ;
4. ແຈ້ງການເຖິງຮາກຖານກໍາມະບານອ້ອມຂ້າງເມືອງ ເພື່ອເກັບເງິນພັນທະຈາກສະມາຊິກກອງທຶນ;
5. ສັງລວມຈໍານວນເງິນທີ່ເກັບໄດ້ສົ່ງໃຫ້ກອງທຶນທານຸເຄາະສະຫະພັນກໍາມະບານແຂວງ;
6. ມອບເງິນນະໂຍບາຍໃຫ້ຄອບຄົວສະມາຊິກກອງທຶນຜູ້ເສຍຊີວິດ;
7. ສະຫຼຸບລາຍຮັບ-ລາຍຈ່າຍກ່ຽວກັບວຽກງານກອງທຶນປະຈໍາເດືອນ, ງວດ ແລະ 1 ປີ ສົ່ງໃຫ້ສະຫະພັນກໍາມະບານແຂວງ;
8. ປະຕິບັດວຽກງານອື່ນຕາມສິດ ແລະ ໜ້າທີ່ຂອງຕົນ.

ມາດຕາ 28 ສິດ ແລະ ໜ້າທີ່ຂອງປະທານສະຫະພັນກໍາມະບານພະແນກການ, ລັດວິສາຫະກິດ, ກໍາມະບານຮາກຖານອ້ອມຂ້າງແຂວງ ແລະ ເມືອງ.

ສິດ ແລະ ໜ້າທີ່ຂອງປະທານສະຫະພັນກໍາມະບານພະແນກການ, ລັດວິສາຫະກິດ, ກໍາມະບານຮາກຖານອ້ອມຂ້າງແຂວງ ແລະ ເມືອງ ມີດັ່ງນີ້:

1. ນໍາພາ, ຈັດຕັ້ງຜັນຂະຫຍາຍຂໍ້ຕົກລົງສະບັບນີ້ໃຫ້ເຂົ້າສູ່ວຽກງານຕົວຈິງຮອບດ້ານ;
2. ຮັບ ແລະ ຄົ້ນຄວ້າເອກະສານສະເໜີເຂົ້າເປັນສະມາຊິກກອງທຶນ ແລະ ລາອອກ ເພື່ອສະເໜີໃຫ້ປະທານກອງທຶນອະນຸມັດ;
3. ຮັບການລາຍງານການເສຍຊີວິດຂອງສະມາຊິກກອງທຶນ ເພື່ອສະເໜີຂໍນະໂຍບາຍຈາກກອງທຶນ;
4. ແຈ້ງການເຖິງ ກໍາມະບານຮາກຖານທີ່ຂຶ້ນກັບ, ສະມາຊິກກອງທຶນ ເພື່ອເກັບເງິນພັນທະ;
5. ສັງລວມຈໍານວນເງິນທີ່ເກັບໄດ້ສົ່ງໃຫ້ກອງທຶນທານຸເຄາະສະຫະພັນກໍາມະບານແຂວງ (ສະເພາະກໍາມະບານຮາກຖານອ້ອມຂ້າງແຂວງ) ຫຼື ສະຫະພັນກໍາມະບານເມືອງ (ສະເພາະກໍາມະບານຮາກຖານອ້ອມຂ້າງເມືອງ);
6. ສະຫຼຸບລາຍຮັບ-ລາຍຈ່າຍກ່ຽວກັບວຽກງານກອງທຶນປະຈໍາເດືອນ, ງວດ ແລະ 1 ປີ ສົ່ງໃຫ້ສະຫະພັນກໍາມະບານແຂວງ(ສະເພາະກໍາມະບານຮາກຖານອ້ອມຂ້າງແຂວງ) ຫຼື ສະຫະພັນກໍາມະບານເມືອງ (ສະເພາະກໍາມະບານຮາກຖານອ້ອມຂ້າງເມືອງ);
7. ປະຕິບັດວຽກງານອື່ນຕາມສິດ ແລະ ໜ້າທີ່ຂອງຕົນ.

ມາດຕາ 29 ສິດ ແລະ ໜ້າທີ່ ຂອງກອງເລຂາກອງທຶນທານຸເຄາະ

ສິດ ແລະ ໜ້າທີ່ ຂອງກອງເລຂາກອງທຶນທານຸເຄາະ ມີດັ່ງນີ້:

1. ເກັບກໍາ, ສັງລວມບັນຊີສະມາຊິກກອງທຶນ, ການເຂົ້າ-ອອກຂອງສະມາຊິກ;
2. ຂຶ້ນແຜນສະເໜີຂໍອະນຸມັດເບີກຈ່າຍນະໂຍບາຍໃຫ້ແກ່ສະມາຊິກກອງທຶນທານຸເຄາະທີ່ເສຍຊີວິດ;
3. ປະຕິບັດ ເບີກຈ່າຍນະໂຍບາຍ ໃຫ້ສະມາຊິກກອງທຶນ ຕາມການຕົກລົງຂອງຄະນະປະທານກອງທຶນ;
4. ສະຫຼຸບລາຍຮັບ-ລາຍຈ່າຍ ຂອງກອງທຶນທານຸເຄາະ ປະຈໍາເດືອນ, ປະຈໍາງວດ ແລະ 1 ປີ;
5. ຈັດຕັ້ງປະຕິບັດວຽກງານອື່ນໆທີ່ກ່ຽວຂ້ອງ ແລະ ຕາມການມອບໝາຍຂອງຄະນະປະທານກອງທຶນທານຸເຄາະ.

ໝວດທີ VIII
ການກວດກາ

ມາດຕາ 30 ອົງການກວດກາ

ອົງການກວດກາກອງທຶນທານຸເຄາະຂອງສະຫະພັນກໍາມະບານແຂວງ ມີດັ່ງນີ້:

1. ອົງການຈັດຕັ້ງການສານພາຍໃນ ປະກອບມີ ຄະນະກຳມະການອຸທ້ອນສານປະຊາຊົນແຂວງ, ຄະນະກຳມະການສານປະຊາຊົນແຂວງ;
2. ອົງການສານພາຍນອກ ປະກອບມີ ແຜນກວ່າການກະຊວງ, ພະແນກການຕ່າງໆ ຂັ້ນແຂວງ, ອົງການຈັດຕັ້ງມະຫາຊົນ, ອົງການປົກຄອງບ້ານ, ພະແນກການເງິນແຂວງ ແລະ ສະພາປະຊາຊົນແຂວງ.

ມາດຕາ 31 ເນື້ອໃນການສອດສານ.

1. ການສອດສານການຈັດຕັ້ງປະຕິບັດວຽກງານການຈັດຕັ້ງ ພົນລະເຮືອນ ກ່ຽວກັບການຄຸ້ມຄອງ ແລະ ນຳໃຊ້ລົດ, ອຸປະກອນເຄື່ອງໃຊ້ຕ່າງໆ;
2. ສອດສານການແກ້ໄຂຄຳສະເໜີຂອງບຸກຄົນ ຫຼື ການຈັດຕັ້ງກ່ຽວກັບວຽກງານການຄຸ້ມຄອງທາງອາຍາ ໃຫ້ປະຕິບັດຕາມກົດໝາຍ ແລະ ລະບຽບການ.

ມາດຕາ 32 ຮູບການສອດສານ.

ຮູບການສອດສານມີ 3 ຮູບແບບ:

1. ການສອດສານປົກກະຕິ ແມ່ນການສອດສານທີ່ໄດ້ດຳເນີນໄປຕາມແຜນການ, ແຜນງານ ແລະ ມີກຳນົດເວລາອັນແນ່ນອນ.
2. ການສອດສານໂດຍມີການແຈ້ງລ່ວງໜ້າ ແມ່ນການສອດສານນອກແຜນ ເມື່ອເຫັນວ່າມີຄວາມຈຳເປັນ ໂດຍແຈ້ງໃຫ້ຜູ້ຖືກສອດສານ ຮັບຊາບລ່ວງໜ້າ;
3. ສອດສານແບບກະທັນຫັນ ແມ່ນການສອດສານນອກແຜນ, ມີຄວາມຈຳເປັນຮີບດ່ວນ ໂດຍບໍ່ມີການແຈ້ງໃຫ້ຜູ້ຖືກສອດສານຮັບຊາບລ່ວງໜ້າ.

ໝວດທີ IX
ນະໂຍບາຍຕໍ່ຜູ້ທີ່ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

ມາດຕາ 33 ນະໂຍບາຍຕໍ່ ຜູ້ທີ່ມີຜົນງານ.

ບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນໆ ຕາມຄວາມເໝາະສົມ.

ມາດຕາ 34 ມາດຕະການຕໍ່ຜູ້ລະເມີດ.

ບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດຂໍ້ຕົກລົງສະບັບນີ້ ຈະຖືກສຶກສາອົບຮົມ, ລົງວິໄນ, ໃຊ້ມາດຕະການທາງແພ່ງ, ມາດຕະການທາງອາຍາ ຕາມແຕ່ກໍລະນີເບົາ ຫຼື ໜັກ ທີ່ໄດ້ກຳນົດໄວ້ໃນກົດໝາຍ.

ມາດຕາ 35 ມາດຕະການສຶກສາອົບຮົມ

ບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດຂໍ້ຕົກລົງສະບັບນີ້ໃນກໍລະນີທີ່ບໍ່ຮ້າຍແຮງສາມາດແກ້ໄຂໄກ່ເກ່ຍໃຊ້ແທນຄ່າເສຍຫາຍໄດ້ ຈະຖືກກ່າວເຕືອນ ແລະ ສຶກສາອົບຮົມ.

ມາດຕາ 36 ມາດຕະການທາງວິໄນ

ພະນັກງານ-ລັດຖະກອນ, ເຈົ້າໜ້າທີ່ ທີ່ລະເມີດຂໍ້ຕົກລົງສະບັບນີ້ ລັກສະນະເບົາບາງເຊິ່ງບໍ່ເປັນການກະທຳຜິດທາງອາຍາ ຈະຖືກໂຈະການເລື່ອນຊັ້ນ-ຂັ້ນເງິນເດືອນ, ຍ້ອງຍໍ ຫຼື ປົດຕຳແໜ່ງ, ຍົກຍ້າຍໄປຮັບໜ້າທີ່ອື່ນທີ່ຕ່ຳກວ່າເກົ່າ ຫຼື ໃຫ້ອອກຈາກລັດຖະກອນ, ຜູ້ທີ່ຖືກປະຕິບັດວິໄນຕ້ອງສົ່ງຊັບສິນຂອງຕົນທີ່ໄດ້ມາໂດຍບໍ່ຖືກຕ້ອງຄືນໃຫ້ການຈັດຕັ້ງຢ່າງຄົບຖ້ວນ.

ມາດຕາ 37 ມາດຕະການດຳເນີນຄະດີຕາມກົດໝາຍ

ໃນກໍລະນີບຸກຄົນ ຫຼື ການຈັດຕັ້ງທີ່ລະເມີດຂໍ້ຕົກລົງສະບັບນີ້ ຈະຖືກດຳເນີນຄະດີທາງແພ່ງ ໃນກໍລະນີກໍ່ຄວາມເສຍຫາຍທີ່ບໍ່ຮ້າຍແຮງ ແລະ ຄະດີອາຍາ ໃນກໍລະນີມີການລະເມີດຮ້າຍແຮງ ເຂົ້າຄ່າຍສໍ້ໂກງ, ຍັກຍອກຊັບ ເຊິ່ງໄດ້ກຳນົດໄວ້ໃນກົດໝາຍ ທີ່ເປັນການກະທຳຜິດທາງອາຍາ.

ໝວດທີ X
ບົດບັນຍັດສຸດທ້າຍ

ມາດຕາ 38 ການຈັດຕັ້ງປະຕິບັດ.

ມອບໃຫ້ສະຫະພັນກຳມະບານແຂວງເປັນເຈົ້າການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

ມາດຕາ 39 ຜົນສັກສິດ.

ຂໍ້ຕົກລົງສະບັບນີ້ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ແລະ ພາຍຫຼັງໄດ້ລົງຈົດໝາຍເຫດທາງລັດຖະການ 15 ວັນ.

ເຈົ້າແຂວງ

ປອ. ກອງແກ້ວ ໄຊສົງຄາມ